www.maginternational.org

ອົງການເກັບກູ້ລະເບີດ ແມັກ ແມ່ນອົງການຊ່ວຍເຫຼືອທາງດ້ານມະນຸດສະທຳ ໃນການກວດກູ້ສິ່ງທີ່ຕົກຄ້າງຈາກສົງຄາມ ເພື່ອສ້າງຜົນປະໂຫຍດໃຫ້ກັບຊຸມຊົນໃນທົ່ວໂລກ. ອົງການເກັບກູ້ລະເບີດ ແມັກ ໄດ້ຮັບລາງວັນໂນເບວທາງດ້ານສັນຕິພາບໂລກ ໃນປີ 1997. ພວກເຮົາໄດ້ດຳເນີນການປະຕິບັດງານ ແລະ ຫາວິທີທາງຊ່ວຍໃນຂະບວນການສ້າງສັນຕິພາບ ແລະ ຄວາມໝັ້ນຄົງ ໃນບັນດາປະເທດທີ່ໄດ້ຮັບຜົນກະທົບຈາກສົງຄາມໃນອາດີດ. ໃນໄລຍະ 25 ປີທີ່ຜ່ານມາ. ພວກເຮົາໄດ້ສ້າງຄວາມປອດໄພ ໂດຍການກຳຈັດ ແລະ ທຳລາຍ ກັບດັກລະເບີດ, ລູກລະເບີດ ແລະ ອາວຸດ ນັບເປັນຈຳນວນຫຼວງຫຼາຍ.

# ປະກາດຮັບສະໝັກ ພະນັກງານ (ຄົນທ້ອງຖິ່ນແຂວງຊຽງຂວາງ)





ອົງການເກັບກູ້ລະເບີດ ແມັກ ໄດ້ເປີດໂອກາດທີ່ເທົ່າທຽມກັນໃຫ້ກັບຜູ້ສະໝັກທຸກຄົນທີ່ມີຄຸນວຸດທິເໝາະສົມໂດຍບໍ່ຈຳກັດເລື່ອງ: ເພດ, ສະພາບຮ່າງກາຍ, ຊົນເຜົ່າ, ສາດສະໜາ/ຄວາມເຊື່ອຖື




ອົງການເກັບກູ້ລະເບີດ ແມັກ ໄດ້ເຂົ້າມາເຮັດວຽກໃນ ສປປ ລາວ ຕັ້ງແຕ່ 1994 ໃນການແກ້ໄຂບັນຫາ ແລະ ໃຫ້ຄວາມຊ່ວຍເຫຼືອ ຕໍ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກລະເບີດທີ່ບໍ່ທັນແຕກ ເພື່ອໃຫ້ພວກເຂົາມີສະພາບແວດລ້ອມທີ່ປອດໄພໃນອານາຄົດ. ໂດຍມີເປົ້າໝາຍໃນການແບ່ງເບົາຜົນກະທົບຈາກລະເບີດທີ່ບໍ່ທັນແຕກ ທີ່ຍັງຄົງສ້າງຄວາມເສຍຫາຍຕໍ່ກັບການດຳລົງຊີວິດ, ສຸຂະພາບ, ການພັດທະນາເສດຖະກິດ - ສັງຄົມ ຂອງປະຊາຊົນ ແລະ ຊຸມຊົນ ທີ່ຢູ່ໃນແຂວງ ຊຽງຂວາງ ແລະ ແຂວງຄຳມ່ວນ.

## ຫົວໜ້າທີມ ພົວພັນຊຸມຊົນ (CLS) (04 ຕຳແໜ່ງ)
## ປະຈຳຢູ່ ອົງການເກັບກູ້ລະເບີດ ແມັກ ແຂວງຊຽງຂວາງ (ໄລຍະສັນຍາ 6 ເດືອນ-ອີງຕາມທຶນ)

**ໜ້າທີ່ຮັບຜິດຊອບຫຼັກ:**

ຫົວໜ້າທີມພົວພັນຊຸມຊົນ ມີໜ້າທີ່ຄຸ້ມຄອງການປະຕິບັດວຽກໃນພາກສະໜາມ ເພື່ອຮັບປະກັນໃຫ້ກິດຈະກຳພົວພັນຊຸມຊົນທີ່ດຳເນີນການໂດຍພະນັກງານພົວພັນຊຸມຊົນ (CLO) ຈັດຕັ້ງປະຕິບັດໃຫ້ສອດຄ່ອງຕາມແຜນງານທີ່ໄດ້ວາງໄວ້ຮ່ວມກັບຜູ້ປະສານງານຝ່າຍພົວພັນຊຸມຊົນ (CLC). ຜູ້ຫົວໜ້າທີມພົວພັນຊຸມຊົນ ຈະຮັບປະກັນໃຫ້ການປະຕິບັດວຽກ ສອດຄ່ອງກັບມາດຕະຖານການປະຕິບັດວຽກ ແລະ ຄູ່ມືທາງດ້ານວິຊາການຕ່າງໆ ໃນລະຫວ່າງການຈັດຕັ້ງປະຕິບັດ. ນອກຈາກນີ້, ຫົວໜ້າທີມພົວພັນຊຸມຊົນຈະຮັບຜິດຊອບໃນການຕິດຕາມການປະຕິບັດວຽກໃນພາກສະໜາມ, ການຝຶກອົບຮົມພາຍໃນ ແລະ ຊີ້ນຳຂັ້ນຕອນເລີ່ມຕົ້ນ ໃນຂະບວນການຄຸ້ມຄອງ ແລະ ຄວບຄຸມຄຸນນະພາບ.

<u>ການຊີ້ນຳ ແລະ ການສະໜັບສະໜູນທີມງານ:</u>

- ຊີ້ນຳ ແລະ ໃຫ້ຄຳແນະນຳພະນັກງານພົວພັນຊຸມຊົນ ປະຈຳວັນ.
- ຕິດຕາມຜົນການປະຕິບັດວຽກຂອງທີມງານ ແລະ ຮັບປະກັນວ່າ ໄດ້ປະຕິບັດຕາມ ແຜນງານ ແລະ ຕາຕະລາງການເຮັດວຽກ.
- ຮັບປະກັນວ່າ ພະນັກງານພົວພັນຊຸມຊົນທຸກຄົນປະຕິບັດຕາມມາດຕະຖານທາງດ້ານຄວາມປອດໄພ ແລະ ລາຍງານເຫດການດ້ານຄວາມໝັ້ນຄົງທີ່ເກີດຂຶ້ນທັນທີ.

<u>ການວາງແຜນ ແລະ ຈັດຕັ້ງປະຕິບັດກິດຈະກຳພົວພັນຊຸມຊົນ:</u>

- ສ້າງ ແລະ ຮັກສາຄວາມສຳພັນທີ່ດີກັບອຳນາດການປົກຄອງທ້ອງຖິ່ນ, ຊຸມຊົນ ແລະ ບັນດາພາກສ່ວນກ່ຽວຂ້ອງ ເພື່ອສະໜັບສະໜູນການການຈັດຕັ້ງປະຕິບັດວຽກຂອງ ອົງການເກັບກູ້ລະເບີດ ແມັກ ສາມາດຳເນີນຢ່າງສະດວກ.
- ປະສານງານກິດຈະກຳປະຈຳວັນ ແລະ ແຜນການລົງພື້ນທີ່ກັບພະນັກງານພົວພັນຊຸມຊົນ ແລະ ຜູ້ປະສານງານຝ່າຍພົວພັນຊຸມຊົນ.
- ສະໜອງຂໍ້ມູນຢ່າງຖືກຕ້ອງ ແລະ ໃຫ້ທັນເວລາແກ່ຜູ້ປະສານງານຝ່າຍພົວພັນຊຸມຊົນ ແລະ ຫົວໜ້າຝ່າຍພົວພັນຊຸມຊົນ ເພື່ອສະໜັບສະໜູນໃນການຈັດບຸລິມະສິດ ແລະ ລະບຸກຸ່ມເປົ້າໝາຍ ແລະ ພື້ນທີ່ເປົ້າໝາຍສຳລັບວຽກງານພົວພັນຊຸມຊົນ ແລະ ກິດຈະກຳທາງດ້ານວິຊາການອື່ນໆ.

<u>ການຝຶກອົບຮົມ ແລະ ການສ້າງຄວາມອາດສາມາດ:</u>

- ສະໜັບສະໜູນຜູ້ປະສານງານຝ່າຍພົວພັນຊຸມຊົນ ແລະ ຫົວໜ້າຝ່າຍພົວພັນຊຸມຊົນ ໃນການວາງແຜນ ແລະ ຈັດຝຶກອົບຮົມໃຫ້ແກ່ພະນັກງານໃໝ່ ພ້ອມທັງຝຶກອົບຮົມທົບທວນຄວາມຮູ້ໃຫ້ແກ່ພະນັກງານພົວພັນຊຸມຊົນທັງໝົດ.

- ຈັດຝຶກອົບຮົມພາຍໃນທີມງານ ອີງຕາມຄວາມຮຽກຮ້ອງຕ້ອງການ ແລະ ຈຸດທີ່ຕ້ອງການພັດທະນາ ທີ່ລະບຸໄດ້ຈາກການລົງຕິດຕາມພາກສະໜາມ ໂດຍຮ່ວມກັບຜູ້ປະສານງານຝ່າຍພົວພັນຊຸມຊົນ.

<u>ການຕິດຕາມ ແລະ ການລາຍງານ</u>

- ຕິດຕາມການຈັດຕັ້ງປະຕິບັດແຜນງານກິດຈະກຳພົວພັນຊຸມຊົນ ເພື່ອຮັບປະກັນວ່າ ສາມາດຈັດຕັ້ງປະຕິບັດຕາມເວລາ ແລະ ບັນລຸເປົ້າໝາຍ.
- ລາຍງານການລະເມີດມາດຕະຖານການປະຕິບັດວຽກຂອງອົງການເກັບກູ້ລະເບີດ ແມັກ ໃຫ້ກັບຜູ້ປະສານງານຝ່າຍພົວພັນຊຸມຊົນ ແລະ ຫົວໜ້າຝ່າຍພົວພັນຊຸມຊົນ.
- ເຮັດບົດລາຍງານປະຈຳວັນ, ປະຈຳອາທິດ, ແລະ ປະຈຳເດືອນຢ່າງຖືກຕ້ອງ ໂດຍນຳໃຊ້ແບບຟອມມາດຕະຖານ ແລະ ສົ່ງໃຫ້ຜູ້ປະສານງານຝ່າຍພົວພັນຊຸມຊົນ ໃຫ້ທັນຕາມກຳນົດເວລາ.

**<u>ເງື່ອນໄຂຂອງຜູ້ສະໝັກ</u>:**

- ຮຽນຈົບວິຊາຊີບສາຂາໃດໜຶ່ງ ໃນລະດັບຊັ້ນສູງ ຫຼື ທຽບເທົ່າ ຂຶ້ນໄປ.
- ມີໃບຂັບຂີ່ລົດຈັກ ປະເພດ A ຂຶ້ນໄປ ແລະ ຕ້ອງຍັງມີອາຍຸການນຳໃຊ້ຢູ່
- ຜູ້ສະໝັກຕ້ອງມີ ອາຍຸລະຫວ່າງ 18 ຫາ 45 ປີ ແລະ ເປັນຄົນທ້ອງຖິ່ນ ແຂວງ ຊຽງຂວາງ.
- ມີປະສົບການໃນການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກິດຈະກຳໃນພາກສະໜາມ, ພ້ອມທັງຄວາມສາມາດໃນການພັດທະນາ ແລະ ປະຕິບັດຕາມແຜນງານຢ່າງລະອຽດ.
- ມີປະສົບການໃນການເກັບກຳຂໍ້ມູນ, ການຈັດການບໍລິຫານ ແລະ ການວິເຄາະຂໍ້ມູນ.
- ມີປະສົບການໃນການດຳເນີນ ແລະ ອຳນວຍຄວາມສະດວກໃນການຝຶກອົບຮົມ.
- ມີປະສົບການເຮັດວຽກກັບຊຸມຊົນໃນເຂດຊົນນະບົດ ຢູ່ແຂວງ ຊຽງຂວາງ, ໂດຍສະເພາະເຮັດວຽກກັບຫຼາຍກຸ່ມຊົນເຜົ່າ ແລະ ວັດທະນະທຳທີ່ຫຼາກຫຼາຍ ຈະພິຈາລະນາເປັນພິເສດ.
- ມີທັກສະທາງດ້ານການນຳໃຊ້ຄອມພິວເຕີ: ມີຄວາມຮູ້ທີ່ດີກ່ຽວກັບ Microsoft Office (ໂດຍສະເພາະ Excel, Word, ແລະ PowerPoint).
- ສາມາດສື່ສານພາສາອັງກິດໄດ້ໃນລະດັບດີ.
- ມີທັກສະທາງດ້ານການຈັດການບໍລິຫານທີ່ດີ.
- ມີຄວາມຮູ້ ແລະ ຄວາມຄຸ້ນເຄີຍກັບເຄື່ອງມື ແລະ ວິທີການປະເມີນຜົນແບບມີສ່ວນຮ່ວມ.
- ມີຄວາມຍືດຍຸ່ນ, ມະນຸດສຳພັນທີ່ດີ ແລະ ມີຄວາມມຸ່ງໝັ້ນໃນການເຮັດວຽກກັບຊຸມຊົນ.
- ສາມາດຂຶ້ນນຳສະເໜີການປະຕິບັດວຽກງານຂອງອົງການແມັກ ໃຫ້ແກ່ຊຸມຊົນຂະໜາດນ້ອຍ ແລະ ໃຫຍ່.
- ມີຄວາມຊື່ສັດ ແລະ ຈັນຍາບັນໃນລະດັບສູງ.

**<u>ເອກະສານທີ່ຕ້ອງໄດ້ປະກອບ</u>:**

- ແບບຟອມສະໝັກວຽກຂອງ ອົງການ ແມັກ (ສາມາດມາເອົາໄດ້ຢູ່ທີ່ຫ້ອງການເກັບກູ້ລະເບີດແມັກ ແຂວງຊຽງຂວາງ ຫລື ດາວໂຫລດໄດ້ຈາກ ເຟສບຸກຂອງອົງການ ແມັກ ປະຈຳ ສປປ ລາວ **FB Page:** **<u>MAG UXO Visitor Information Centres, Lao PDR</u>**), ລິ້ງດາວໂຫລດ: **<u>https://shorturl.at/jgLU8</u>**
- ໃບຢັ້ງຢືນທີ່ຢູ່.
- ໃບຢັ້ງຢືນຄໍ້າປະກັນ ຈາກບ້ານທີ່ອາໄສຢູ່.
- ໃບແຈ້ງໂທດ ເລກທີ 3.
- ໃບຢັ້ງຢືນສຸຂະພາບ (ຈາກໂຮງໝໍ)
- ສຳເນົາໃບຂັບຂີ່
- ສຳເນົາ ປຶ້ມສຳມະໂນຄົວ ແລະ ບັດປະຈຳຕົວ ຫຼື ພາສປອດ (ຖ້າມີ)
- ສຳເນົາ ໃບປະກາສະນີຍາບັດ, ໃບຢັ້ງຢືນການຝຶກອົບຮົມ (ຖ້າມີ)
- ສຳເນົາ ໃບຄະແນນ
- ສຳເນົາ ໃບຜ່ານງານ (ຖ້າມີ)

**<u>ໝາຍເຫດ</u>:** ສຳລັບແບບຟອມສະໝັກວຽກຂອງ ອົງການ ແມັກ ທີ່ມາເອົາຢູ່ຫ້ອງການ ແມ່ນບໍ່ມີຄ່າໃຊ້ຈ່າຍ.

**<u>ວິທີ ແລະ ຂັ້ນຕອນການສະໝັກສຳລັບຕຳແໜ່ງນີ້:</u>**

**ສຳລັບຕຳແໜ່ງນີ້ມີ ສອງ ທາງເລືອກໃຫ້ສະໝັກຄື:**

1. ຜູ້ທີ່ສົນໃຈກະລຸນາປະກອບເອກະສານທີ່ໄດ້ລະບຸຂ້າງເທິງ ແລ້ວສົ່ງເອກະສານທັງໝົດ ໂດຍຂຽນລະບຸຕື່ມໃສ່ໜ້າຊອງ ເຊັ່ນ: **"ຊື່, ເບີໂທລະສັບ ແລະ ຕຳແໜ່ງທີ່ຕ້ອງການສະໝັກ"** ໃຫ້ກັບພະແນກບຸກຄະລາກອນຂອງອົງການເກັບກູ້ລະເບີດແມັກ ຫ້ອງການປະຈຳແຂວງ ບ້ານໂງຍ, ເມືອງແປກ, ແຂວງຊຽງຂວາງ ສອບຖາມຂໍ້ມູນເພີ່ມເຕີມໂມງລັດຖະການ ໂທລະສັບ 061 213420 (ເອກະສານທຸກຢ່າງຍື່ນແລ້ວຈະບໍ່ສາມາດຖອນຄືນໄດ້).
2. ປະກອບເອກະສານທີ່ໄດ້ລະບຸຂ້າງເທິງແລ້ວສະແກນລວມເປັນຟາຍດຽວ ພ້ອມອັບໂຫລດອອນລາຍຜ່ານລີ້ງ:
3.

**Click Link: https://forms.gle/UvpBkAfKsHRP6Gam8**

## ປິດຮັບສະໝັກແມ່ນ ເວລາ 16:00 PM ຂອງ ວັນທີ 30 ເດືອນ ເມສາ 2025

ຜູ້ສະໝັກທີ່ໄດ້ຮັບການຄັດເລືອກເທົ່ານັ້ນ ທີ່ຈະໄດ້ຮັບການຕິດຕໍ່ເພື່ອມາສຳພາດ.

ອີງຕາມຄຳໝັ້ນສັນຍາຂອງອົງການເກັບກູ້ລະເບີດ ແມັກ ວ່າດ້ວຍນະໂຍບາຍດ້ານການປົກປ້ອງ, ການຄັດເລືອກຕຳແໜ່ງນີ້ແມ່ນຕ້ອງ ຜ່ານຂະບວນການກວດສອບປະຫວັດຄວາມເປັນມາ ເພື່ອຢັ້ງຢືນຄວາມຖືກຕ້ອງ ກ່ອນທີ່ຈະມີການສະເຫນີການຈ້າງງານ, ອົງການເກັບ ກູ້ລະເບີດແມັກ ມຸ່ງຫມັ້ນໃນຫຼັກການຂອງຄວາມຫຼາກຫຼາຍ, ສິດສະເຫມີພາບ ແລະ ການມີສ່ວນຮ່ວມ ແລະ ເປີດໂອກາດໃນການຈ້າງ ງານແບບເທົ່າທຽມກັນ. ຖ້າທ່ານຄິດວ່າ ທ່ານມີຄຸນວຸດທິເຫມາະສົມກັບບົດບາດຂອງຕຳແຫນ່ງນີ້ ໃນອົງການຂອງພວກເຮົາ, ພວກເຮົາຍິນ ດີຕ້ອນຮັບການສະຫມັກງານຂອງທ່ານ ໂດຍບໍ່ຄຳນຶງເຖິງພື້ນຖານຄວາມເປັນຢູ່ຂອງທ່ານ. ພວກເຮົາມຸ່ງຫມັ້ນໃນການສະຫນອງສະພາບ ແວດລ້ອມໃນການເຮັດວຽກແບບມີສ່ວນຮ່ວມ ແລະ ໃຫ້ສະຫນັບສະຫນູນ ເພື່ອໃຫ້ພະນັກງານທຸກຄົນຮູ້ສຶກໄດ້ຮັບຄວາມເຄົາລົບ ແລະ ໄດ້ຮັບການສະຫນັບສະຫນູນ ແລະ ໃນການບັນລຸຄວາມອາດສາມາດຂອງເຂົາເຈົ້າ.

ທຸກໆຮູບແບບຂອງການຈ້າງງານ ແລະ ຂະບວນການຄັດເລືອກພະນັກງານ, ບໍ່ວ່າຈະເປັນການຈ້າງງານພະນັກງານໃຫມ່ຄັ້ງທຳອິດ ຫຼື ການເລື່ອນຕຳແຫນ່ງພະນັກງານພາຍໃນອົງການ ຈະອີງໃສ່ຄຸນສົມບັດ, ຄຸນວຸດທິ, ຄວາມສາມາດ, ຜົນການປະຕິບັດວຽກງານ ແລະ ຄວາມຕ້ອງການຂອງອົງການ , ອົງການເກັບກູ້ລະເບີດ ແມັກ (ຫຼື ພາກສ່ວນອື່ນໆ ທີ່ກ່ຽວຂ້ອງກັບຂະບວນການຄັດ ເລືອກພະນັກງານ ຂອງອົງການເກັບກູ້ລະເບີດ ແມັກ) ຈະບໍ່ເກັບຄ່າທຳນຽມ (ຫຼື ຮັບເອົາຂອງຂວັນ ຫຼື ສິ່ງຕອບ ແທນອື່ນໆ) ໃນທຸກຂັ້ນຕອນຂອງຂະບວນການຄັດເລືອກພະນັກງານ (ການປະກາດຮັບສະຫມັກວຽກ, ການສຳ ພາດ, ການປະເມີນຜົນ), ຖ້າທ່ານມີຂໍ້ຂ້ອງໃຈກ່ຽວກັບຂະບວນການນີ້ ທ່ານສາມາດລາຍງານ ໃຫ້ອົງການຂອງພວກເຮົາຜ່ານທາງ ອີເມວ safeguarding.la@maginternational.org

**ຂໍ້ກຳນົດ ແລະ ເງື່ອນໄຂ:**

ອົງການເກັບກູ້ລະເບີດ ແມັກ ປະຈຳ ສປປ ລາວ ມີສະພາບແວດລ້ອມຂອງການເຮັດວຽກທີ່ດີ, ສະຫວັດດີການທີ່ດີ ແລະ ມີນະໂຍບາຍໃນການສົ່ງເສີມຝຶກອົບຮົມເພື່ອຍົກລະດັບຄວາມຮູ້ຄວາມສາມາດໃຫ້ກັບພະນັກງານ.